ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ: 03124 /ກພສ

ນະຄອນຫຼວງວຽງຈັນ, ວັນທີ: 15 JUN 2018

# ແຈ້ງການ

**ເຖິງ: ຫົວໜ້າ ພະແນກແຜນການ ແລະ ຂໍ້ມູນຂ່າວສານ;**

**ຫົວໜ້າ ກອງຄຸ້ມຄອງພາສີ I, II, III, IV, V, VI ແລະ VII.**

**ເລື່ອງ: ການຈັດຕັ້ງປະຕິບັດ ນຳໃຊ້ບັດອະນຸຍາດແຈ້ງພາສີ ຜ່ານລະບົບການແຈ້ງພາສີເປັນລາຍລະອຽດ ແບບອີເລັກໂທຣນິກ (ASYCUDA).**

- ອີງຕາມ ກົດໝາຍພາສີສະບັບເລກທີ 04/ສພຊ,ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ, ສະບັບປັບປຸງບາງມາດຕາ ເລກທີ: 57/ກພຊ, ລົງວັນທີ: 24 ທັນວາ 2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ, ສະບັບເລກທີ: 2826/ກງ, ລົງວັນທີ: 22 ສິງຫາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ, ສະບັບເລກທີ: 02539/ກພສ, ລົງວັນທີ: 21 ພຶດສະພາ 2018, ວ່າດ້ວຍການຄຸ້ມຄອງການນຳໃຊ້ບັດອະນຸຍາດແຈ້ງພາສີຜ່ານລະບົບການແຈ້ງພາສີເປັນລາຍລະອຽດ (ASYCUDA).

ເພື່ອເຮັດໃຫ້ການຄຸ້ມຄອງ, ຂັ້ນຕອນການດຳເນີນການອະນຸຍາດອອກບັດແຈ້ງພາສີ ແລະ ການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ ແລະ ຮັບປະກັນ ໃຫ້ເກີດປະສິດທິຜົນສູງສຸດ.

**ຫົວໜ້າກົມພາສີ ອອກແຈ້ງການ ຄື:**

1. ມອບໃຫ້ພະແນກແຜນການ ແລະ ຂໍ້ມູນຂ່າວສານ, ກອງຄຸ້ມຄອງພາສີ I, II, III, IV, V, VI ແລະ VII ແຕ່ງຕັ້ງຄະນະພະແນກ, ຄະນະກອງຄຸ້ມຄອງພາສີ, ຂະແໜງ ແລະ ວິຊາການ ຮັບຜິດຊອບໃນການດຳເນີນການອອກບັດອະນຸຍາດແຈ້ງພາສີ ຜ່ານລະບົບແຈ້ງພາສີເປັນລາຍລະອຽດແບບອີເລັກໂທຣນິກ (ASYCUDA) ໃຫ້ສຳເລັດ ແລະ ສົ່ງໃຫ້ກົມພາສີ ກ່ອນວັນທີ 15 ມິຖຸນາ 2018;
2. ມອບໃຫ້ພະແນກແຜນການ ແລະ ຂໍ້ມູນຂ່າວສານ, ກອງຄຸ້ມຄອງພາສີ I, II, III, IV, V, VI ແລະ VII ຈັດຕັ້ງເຜີຍແຜ່, ແຈ້ງໃຫ້ບັນດາ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ສາກົນ ຮັບຊາບຕໍ່ ຂໍ້ຕົກລົງຂອງກົມພາສີ, ສະບັບເລກທີ: 02539/ກພສ, ລົງວັນທີ: 21 ພຶດສະພາ 2018, ວ່າດ້ວຍການຄຸ້ມຄອງການນຳໃຊ້ບັດອະນຸຍາດແຈ້ງພາສີຜ່ານລະບົບການແຈ້ງພາສີເປັນລາຍລະອຽດ (ASYCUDA);
3. ສຳລັບການຝຶກອົບຮົມ ໃນການແນະນຳວິທີການຈັດຕັ້ງປະຕິບັດຕົວຈິງ ແມ່ນຈະໄດ້ຈັດຂຶ້ນ ທີ່ນະຄອນຫຼວງວຽງຈັນ ພາຍໃນທ້າຍເດືອນມິຖຸນາ ປີ 2018, ເຊິ່ງຈະໄດ້ແຈ້ງເຊີນ ຄະນະຮັບຜິດຊອບການອອກບັດອະນຸຍາດແຈ້ງພາສີ ຈາກພະແນກແຜນການ ແລະ ຂໍ້ມູນຂ່າວສານ, ກອງຄຸ້ມຄອງພາສີ I, II, III, IV, V, VI ແລະ VII ເຂົ້າຮ່ວມ, ສ່ວນລາຍລະອຽດ ກົມພາສີ ຈະໄດ້ແຈ້ງ ວັນ, ເວລາ ແລະ ສະຖານທີ່ ພາຍຫຼັງ;
4. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ